*Souphanouvong University Journal of Multidisciplinary Research and Development*
**2024,Vol. 8, No. 2, 127-134**
**https://doi.org/10.69692/SUJMRD0802127**

# Developing English Speaking Skills of 4th Year Students by Using the Cooperative Learning Strategy on Team-Pair-Solo Technique A Case Study of Faculty of Education, Souphanouvong University

**Vatsana KEOPHASITH, Sipaseuth PANFONGPHET, Thongsy XUAMOLEE, Vatthana PHUANGSAVTH and Khamsone PHOMMANITH**
*Department of Language Pedagogy, Faculty of Education, Souphanouvong University, Lao PDR*

[1]***Correspondence:*** *Vatsana KEOPHASITH, Department of Language Pedagogy, Faculty of Education, Souphanouvong University, Tel: +856 020 2980 9546E-mail:* keophasith@hotmail.com

***Article Info:***
*Submitted: Feb 22, 2022*
*Revised: Jun 12, 2022*
*Accepted: Jun 24, 2022*

## Abstract

The purposes of this study were to (1) study the effectiveness of using the cooperative learning strategy on team-pair-solo technique to enhance the students' English speaking skills, and (2) to investigate the students' satisfaction with the use of its teaching technique. The target groups consisted of 19 students from the fourth-year majoring in mathematics in the first semester, academic year 2020-—2021 at Department of Mathematics, Faculty of Education. The instruments used in this research consisted of 4 five-hour lesson plans, one students' English speaking skills assessment form, one English speaking skills test, one observation check list, and one questionnaire about students' satisfaction. The obtained data were analyzed to calculate means, standard deviation and t-test (dependent samples) by SPSS program, version 21.0.

The findings were as follows: Overall, the students' English speaking ability was significantly higher after learning with the use of cooperative learning strategy on team-pair-solo technique, at the 0.05 level, indicating that the teaching strategy was effective in enhancing students' English-speaking skills, and generally, the students' were satisfied with their improvement in English speaking through the use of cooperative learning strategy on team-pair-solo technique, which is viewed at a high level.

**Keywords**: *English language skills, Cooperative learning strategy, Team-Pair [Solo Technique*

## 1. ພາກສະເໜີ

ການຈັດການຮຽນ-ການສອນພາສາອັງກິດເນັ້ນທັກສະການສື່ສານ ໂດຍໃຊ້ຫຼັກສື່ສານດ້ວຍການເວົ້າ ແລະ ການຂຽນດັ່ງທີ່ ສຸມິດຕາ ອັງວັດນະກຸນ (2535) ກ່າວວ່າ ການເວົ້າເປັນການສື່ສານຊະນິດໜຶ່ງທີ່ຖ່າຍທອດຄວາມຄິດຄວາມຮູ້ສຶກ ເພື່ອໃຫ້ຜູ້ຟັງໄດ້ຮັບຮູ້ແລະເຂົ້າໃຈໄດ້; ນອກຈາກນີ້ການເວົ້າ ຍັງສາມາດຊ່ວຍໃຫ້ແລກປ່ຽນຂໍ້ມູນຂ່າວສານທີ່ເປັນປະໂຫຍດໄດ້ຢ່າງຫຼວງຫຼາຍ ປະເທືອງ ໃຈຫານ (2546) ໄດ້ເວົ້າໄວ້ວ່າ ນັກຮຽນທີ່ຮຽນພາສາອັງກິດໃນທຸກລະດັບຊັ້ນມີບັນຫາໃນການເວົ້າ ບໍ່ກ້າທີ່ຈະເວົ້າ ເພາະຂາດຄວາມໝັ້ນໃຈໃນການໃຊ້ພາສາ ສາເຫດໜຶ່ງມາຈາກວິທີການສອນຂອງຜູ້ສອນທີ່ຂາດເທັກນິກ ທີ່ຈະຊ່ວຍໃຫ້ນັກສຶກສາກ້າເວົ້າ ແລະ ເວົ້າໄດ້ຢ່າງຖືກຕ້ອງ ຜູ້ສອນຍັງຄົງຍຶດຫຼັກການສອນແບບເນັ້ນໄວຍາກອນ ແລະ ການແປເຮັດໃຫ້ນັກສຶກສາເກີດຄວາມເບື່ອໜ່າຍ ແລະ ຂາດໂອກາດທີ່ຈະໄດ້ເຝິກເວົ້າ ເພື່ອການສື່ສານທັງໃນຫ້ອງຮຽນແລະນອກຫ້ອງຮຽນ ຜູ້ສອນບາງຄົນຍັງຄົງມີຄວາມເຊື່ອວ່າ ຖ້າເນັ້ນການຮຽນ-ການສອນພາສາເພື່ອການສື່ສານແລ້ວ ນັກສຶກສາ

ບໍ່ມີຄວາມແມ່ນຢໍາ ໃນເລື່ອງໄວຍາກອນ ເຮັດໃຫ້ບໍ່ສາມາດອ່ານແລະຂຽນໄດ້ ຈາກບັນຫາດ້ານການເວົ້າທີ່ ສູນພັດທະນາຄູ ແລະ ກົມສ້າງຄູ (2019) ຈຶ່ງໄດ້ກໍານົດໃນຫຼັກສູດວິຊາຄູຂັ້ນພື້ນຖານ ໂດຍສະເພາະຕົວຊີ້ວັດໃນ ການໃຊ້ພາສາອັງກິດ ວ່ານັກສຶກສາທີ່ຮຽນໃນຫຼັກສູດຄູຄະນິດສາດ ຕ້ອງສາມາດໃຊ້ພາສາຕ່າງປະເທດໃນການຟັງ, ການເວົ້າ ການອ່ານ ແລະ ການຂຽນ ສາມາດແລກປ່ຽນຂໍ້ມູນ ຂ່າວສານ ສະແດງຄວາມຮູ້ສຶກ ແລະ ຄວາມຄິດເຫັນ ຕີຄວາມ, ນໍາສະເໜີ ຄວາມຄິດລວບຍອດ ແລະ ຄວາມຄິດເຫັນໃນເລື່ອງຕ່າງໆ ແລະ ສ້າງຄວາມສໍາພັນລະຫວ່າງບຸກຄົນຢ່າງເໝາະສົມ

ການເວົ້າເປັນທັກສະໃນການຜະລິດພາສາປະກອບດ້ວຍທັກສະການເວົ້າ ແລະ ທັກສະການຂຽນ (productive skills) ແລະ ເປັນທັກສະທາງພາສາທີ່ສໍາຄັນໃນການຮຽນຮູ້ຂອງຜູ້ຮຽນ ເພື່ອເຮັດໃຫ້ຜູ້ຮຽນເປັນຜູ້ສື່ສານທີ່ດີ ການເວົ້າ ກໍ່ຄືການໃຊ້ອາການກິລິຍາທາງພາສາ ເພື່ອສື່ສານກັບຜູ້ອື່ນ ຮາກເມີ (Harmer, 2001: 269) ໄດ້ໃຫ້ທັດສະນະວ່າ ຄວາມສາມາດໃນການເວົ້າຢ່າງ ຄ່ອງແຄ້ວບໍ່ແມ່ນຄວາມຮູ້ທາງພາສາ ແຕ່ເປັນຄວາມສາມາດຜະລິດຂໍ້ມູນ ແລະ ພາສາ ເມື່ອ ຜູ້ຮຽນໄດ້ເຂົ້າຮ່ວມການອະພິປາຍ ຈຸດປະສົງຂອງການເວົ້າອາດຈະເປັນການສະແດງຄວາມຄິດເຫັນ ການຜູ້ຄົນ ຫຼື ການຈໍາແນກຂໍ້ມູນ ຢ່າງໃດກໍຕາມ ຄວາມສາມາດໃນການເວົ້າກໍຍັງ ເປັນທັກສະທີ່ມີຄວາມຊັບຊ້ອນ ໃນການ ສື່ສານ

ເມື່ອພິຈາລະນາເຖິງຄວາມສໍາຄັນຂອງຄວາມສາມາດໃນການເວົ້າຂອງຜູ້ຮຽນພາສາອັງກິດ ແລະ ບັນຫາທີ່ເກີດຂຶ້ນໃນຫ້ອງຮຽນເພື່ອນໍາມາພັດທະນາທັກສະການເວົ້າພາສາອັງກິດ ແລະ ສ້າງແຮງຈູງໃຈໃນການຮຽນພາສາເປົ້າໝາຍ ຢ່າງມີປະສິດທິພາບ ໃນບັນຫາການຈັດການຮຽນ-ການສອນ ສາມາດຈັດກິດຈະກໍາທີ່ກ່ຽວຂ້ອງກັບຄວາມສົນໃຈ ແລະ ຄວາມຖະນັດຂອງຜູ້ຮຽນໂດຍພິຈາລະນາເຖິງຄວາມແຕກຕ່າງລະຫວ່າງຄວາມຮູ້ຂອງຜູ້ຮຽນ ໃນດ້ານເທັກນິກ ແລະ ວິທີການສອນ ກິດຈະກໍາການຮຽນຮູ້ທີ່ສາມາດປະຍຸກໃຊ້ເພື່ອແກ້ໄຂບັນຫາການຮຽນ-ການສອນ ຂອງຜູ້ຮຽນ ເພື່ອກະຕຸ້ນຄວາມສົນໃຈຂອງຜູ້ຮຽນ ແລະ ຜູ້ຮຽນສາມາດປະສົບຄວາມສໍາເລັດໃນການຮຽນພາສາອັງກິດ ເປັນເທັກນິກວິທີການສອນປະເພດໜຶ່ງ ໂດຍສະເພາະຂະບວນການເຮັດວຽກເປັນກຸ່ມ (ທິດສະນາ ແຂມມະນີ, 2556)

ຂະບວນການເຮັດວຽກເປັນກຸ່ມ ເປັນເທັກນິກຂອງວິທີການຮຽນຮູ້ແບບຮ່ວມມືທີ່ເນັ້ນ ການຊ່ວຍແກ້ບັນຫາໃນ ຂະບວນການຮຽນ-ການສອນ ເພາະຜູ້ຮຽນສາມາດຊ່ວຍເຫຼືອເຊິ່ງກັນ ແລະ ກັນ ໃນການແກ້ໄຂບັນຫາ ລະຫວ່າງການຮຽນຮູ້ ຄູຜູ້ສອນສ່ວນຫຼາຍໄດ້ພິຈາລະນາວິທີການຮຽນຮູ້ແບບຮ່ວມມື ແລະ ຂະບວນເຮັດວຽກກຸ່ມ ເປັນວິທີການ ທີ່ມີປະສິດທິພາບໃນການຊ່ວຍເຫຼືອຜູ້ຮຽນທີ່ປະສົບບັນຫາໃນການຮຽນ ການເຮັດວຽກພາຍໃນກຸ່ມ ເຫດຜົນທີ່ ກ່າວມາຂ້າງຕົ້ນຜູ້ວິໄຈສົນໃຈນໍາວິທີການຮຽນຮູ້ແບບຮ່ວມມືທີ່ເນັ້ນວິທີການສອນແບບ ທີມ ຄູ່ ດ່ຽວ (Team-Pair-Solo) ວິທີການສອນແບບ ທີມ ຄູ່ ດ່ຽວ ເປັນວິທີການຮຽນຮູ້ແບບຮ່ວມມືອີກວິທີການໜຶ່ງ ເນັ້ນໃຫ້ຜູ້ຮຽນແກ້ບັນຫາ ແລະ ເຮັດວຽກຮ່ວມກັນເປັນກຸ່ມ ແບ່ງອອກເປັນ 3 ຂັ້ນໄດ້ແກ່: ຂັ້ນທີ1 ຂັ້ນທີມ ໃນຂັ້ນທີມນີ້ມີສະມາຊິກ 4-6 ຄົນ , ຂັ້ນທີ 2 ເປັນຂັ້ນທີ່ແຍກຈາກຂັ້ນທີມ ໂດຍການຈັບຄູ່ ແລ້ວຊ່ວຍກັນແກ້ບັນຫາ ເພື່ອໃຫ້ບັນລຸຈຸດປະສົງໄປນໍາກັນ ແລ້ວເຮັດ ຂັ້ນທີ່3 ເປັນຂັ້ນດ່ຽວ ຫຼື ເປັນລາຍບຸກຄົນ ເປັນຂັ້ນທີ່ຜູ້ຮຽນ ຮຽນຮູ້ດ້ວຍຕົນເອງ ຕາມທີ່ ຄາເກນ (Kagan:2000) ໄດ້ເວົ້າໄວ້ວ່າ ວິທີການສອນແບບ ທີມ ຄູ່ ດ່ຽວ ຊ່ວຍໃຫ້ຜູ້ຮຽນ ຮຽນຮູ້ທັກສະການແກ້ໄຂບັນຫາມີທັກສະທາງສັງຄົມ ມີປະຕິສໍາພັນຊ່ວຍເຫຼືອເຊິ່ງກັນ ແລະ ກັນ ແລະ ກະຕຸ້ນ ຫຼື ສ້າງຄວາມສົນໃຈຜ່ານຂະບວນການເຮັດວຽກເປັນກຸ່ມ ເຮັດວຽກເປັນຄູ່ ແລະ ເຮັດວຽກເປັນລາຍບຸກຄົນ. ດັ່ງນັ້ນ; ວິທີການສອນແບບ ທີມ ຄູ່ ດ່ຽວ ເປັນວິທີການທີ່ມີປະໂຫຍດໃນການພັດທະນາຜູ້ຮຽນຄື: ຊ່ວຍພັດທະນາທັກສະທາງສັງຄົມ ຮອບຮອມອີງຄວາມຮູ້ ຂອງຜູ້ຮຽນ ແລະ ສ້າງຜູ້ຮຽນແຕ່

ລະຄົນໃຫ້ມີຄວາມຮັບຜິດຊອບຕໍ່ການເຮັດວຽກນຳອີກ ທັງຊ່ວຍໃຫ້ຜູ້ຮຽນໄດ້ເຝິກເວົ້າພາສາອັງກິດຜ່ານຂະບວນການເປັນກຸ່ມ ເປັນຄູ່ ແລະ ດ່ຽວ ດ້ວຍຄວາມສາມາດຂອງຜູ້ຮຽນແຕ່ລະຄົນ ເຮັດໃຫ້ເກີດທັກສະ ແລະ ເຂົ້າໃຈໃນບໍລິບົດ ດ້ວຍຂະບວນເຮັດວຽກກຸ່ມຮ່ວມກັນ ແລະ ຈາກການສຶກສາງານວິໄຈໃນການພັດທະນາທັກສະການເວົ້າພາສາອັງກິດຜ່ານວິທີການຮູ້ແບບ ຮ່ວມມື ແລະວິທີການສອນແບບ ທີມ ຄູ່ ດ່ຽວ ຂອງ ເຢນີ ຊຸລາສະຕີ (Yeni, 2009) ໄດ້ສຶກສາການເສີມສ້າງການເວົ້າພາສາອັງກິດຜ່ານການເວົ້າອະທິປາຍບົດຄວາມ ໂດຍໃຊ້ວິທີການສອນແບບ ທີມ ຄູ່ ດ່ຽວ ໃນໂຮງຮຽນມັດຍົມໂອເລ ຜົນການສຶກສາພົບວ່າ: ວິທີການສອນທີມ ຄູ່ ດ່ຽວ ເປັນວິທີການສອນທີ່ມີປະສິດທິພາບ ທີ່ສາມາດໃຊ້ໃນການພັດທະນາທັກສະການເວົ້າສຳລັບຜູ້ຮຽນຊ່ວຍສົ່ງເສີມທັກສະທາງສັງຄົມລະຫວ່າງຜູ້ຮຽນ ແລະ ຊ່ວຍສອນໃຫ້ຜູ້ຮຽນແກ້ບັນຫາຜ່ານການສື່ສານ ອະພິປາຍວຽກພາຍໃນກຸ່ມເຊິ່ງສອດຄ່ອງກັບ ອີກະເຄີ ນິອະວະຕີ (Ika, 2012) ໄດ້ສຶກສາຜົນການໃຊ້ເກມການເດົາຮູບພາບໃນວິທີການສອນແບບ ທີມ ຄູ່ ດ່ຽວ ເພື່ອພັດທະນາ ທັກສະການຂຽນການບັນລະຍາຍຂອງນັກຮຽນ

ຈາກທີ່ກ່າວມາຂ້າງເທິງ ຜູ້ວິໄຈເຊື່ອວ່າ ການໃຊ້ວິທີສອນ ແບບທີມ ຄູ່ ດ່ຽວ ທີ່ເປັນເທັກນິກການສອນຂອງວິທີການຮຽນຮູ້ແບບຮ່ວມມືທີ່ສົ່ງເສີມ ການເວົ້າຂອງຜູ້ຮຽນເພື່ອໃຫ້ຜູ້ຮຽນມີໂອກາດໃນການເວົ້າແລະສ້າງຄວາມໝັ້ນໃຈໃນການສື່ສານ ການສະແດງຄວາມຄິດ ແລະ ການປະຕິສຳພັນລະຫວ່າງຜູ້ຮຽນໄດ້ຢ່າງສ້າງສັນ ຍິ່ງໄປກວ່ານັ້ນປະຍຸກໃຊ້ບົດຮຽນທີ່ຖືກສ້າງຂຶ້ນມາໃນຫ້ອງຮຽນເພື່ອນຳໄປໃຊ້ໃນຊີວິດປະຈຳວັນໄດ້. ດັ່ງນັ້ນ; ຜູ້ວິໄຈໄດ້ສົນໃຈສຶກສາວິທີການຮຽນຮູ້ແບບຮ່ວມມືທີ່ເນັ້ນວິທີການສອນແບບ ທີມ ຄູ່ ດ່ຽວ ໃນຫຼັກສູດຄູຄະນິດສາດເພື່ອພັດທະນາທັກສະການເວົ້າຂອງນັກສຶກສາປີທີ 4.

ຈຸດປະສົງຂອງການຄົ້ນຄວ້າປະກອບມີ: 1) ເພື່ອສຶກສາຜົນການຮຽນລະຫວ່າງກ່ອນ ແລະ ຫຼັງໃຊ້ວິທີການຮຽນຮູ້ແບບຮ່ວມມືທີ່ເນັ້ນວິທີການສອນແບບ ທີມ ຄູ່ ດ່ຽວ ຕໍ່ການພັດທະນາທັກສະການເວົ້າພາສາອັງກິດຂອງນັກສຶກສາ ສາຂາຄູຄະນິດສາດ ແລະ 2) ເພື່ອປະເມີນຄວາມເພິ່ງພໍໃຈຂອງນັກນັກສຶກສາຕໍ່ກັບການຮຽນຮູ້ແບບຮ່ວມມືທີ່ເນັ້ນວິທີການສອນແບບ ທີມ ຄູ່ ດ່ຽວ.

## 2. ເຄື່ອງມື ແລະ ວິທີການຄົ້ນຄວ້າ

### 2.1 ເຄື່ອງມືໃນການເກັບຂໍ້ມູນ

1) ບົດສອນວິຊາພາສາອັງກິດທົ່ວໄປ ໂດຍໃຊ້ວິທີການຮຽນຮູ້ແບບຮ່ວມມືທີ່ເນັ້ນ ການສອນແບບ ທີມ ຄູ່ ດ່ຽວ (Team-Pair-Solo) ຈຳນວນ 4 ບົດ ປະກອບດ້ວຍເນື້ອໃນ Apology, Give a direction, Making a phone call ແລະ Sickness & Illness ບົດລະ 5 ຊົ່ວໂມງ ທັງໝົດ 20 ຊົ່ວໂມງ.

2) ແບບທົດສອບທັກສະການເວົ້າພາສາອັງກິດ (English Speaking skills Test) ເປັນແບບທົດສອບທີ່ໃຊ້ວັດທັກສະການເວົ້າພາສາອັງກິດຂອງນັກສຶກສາກ່ອນຮຽນ ແລະ ຫຼັງຮຽນ ເຊິ່ງເປັນຂໍ້ສອບແບບປາລະໄນຊະນິດເລືອກຈຳນວນ 40 ຂໍ້ ປະກອບດ້ວຍເນື້ອໃນ Apology, Giving a direction, Making a phone call ແລະ Sickness & Illness.

3) ແບບປະເມີນທັກສະການເວົ້າພາສາອັງກິດ ໂດຍມີເກນການໃຫ້ຄະແນນທັກສະການເວົ້າພາສາອັງກິດໃນການປະເມີນປະກອບດ້ວຍ 5 ດ້ານ ຄື: ຄຳສັບ, ການອອກສຽງ, ຄວາມຄ່ອງແຄ້ວໃນການເວົ້າ, ການໃຊ້ໄວຍາກອນ ທ່າທີ ແລະ

4) ແບບວັດຄວາມເພິ່ງພໍໃຈທີ່ມີຕໍ່ການພັດທະນາທັກສະການເວົ້າພາສາອັງກິດໂດຍໃຊ້ວິທີການຮຽນຮູ້ແບບຮ່ວມມືທີ່ເນັ້ນວິທີການສອນແບບ ທີມ ຄູ່ ດ່ຽວ ໂດຍສ້າງເປັນແບບສອບຖາມຊະນິດແບບມາດຕາສ່ວນປະມານ (Rating Scale) ຊຶ່ງຜູ້ວິໄຈສ້າງຂຶ້ນຕາມແນວຄິດຂອງ ລິເຄີ (Likert) ໂດຍມີຄ່າແປຄວາມໝາຍດັ່ງນີ້:

5 ມີຄວາມເພິ່ງພໍໃຈຫຼາຍທີ່ສຸດ

4 ມີຄວາມເພິ່ງພໍໃຈຫຼາຍ

3 ມີຄວາມເພິ່ງພໍໃຈປານກາງ

2 ມີຄວາມເພິ່ງພໍໃຈໜ້ອຍ

1 ມີຄວາມເພິ່ງພໍໃຈໜ້ອຍທີ່ສຸດ

## 2.2 ວິທີການດຳເນີນການຄົ້ນຄວ້າ

### 2.2.1 ກຸ່ມເປົ້າໝາຍ

ກຸ່ມທົດລອງຂອງການຄົ້ນຄວ້າໃນຄັ້ງນີ້ແມ່ນນັກສຶກສາປີທີ 4 ຈຳນວນ 1 ຫ້ອງມີ 19 ຄົນ ໂດຍເລືອກແບບ (Conveniences Sampling) ທີ່ສັງກັດຢູ່ໃນສາຂາຄູຄະນິດສາດ, ພາກວິຊາຄູວິທະຍາສາດທຳມະຊາດ, ຄະນະສຶກສາສາດ, ມະຫາວິທະຍາໄລສຸພານຸວົງ ສົກສຶກສາ 2020 - 2021.

### 2.2.2 ເນື້ອໃນທີ່ໃຊ້ໃນການຄົ້ນຄວ້າ

ເນື້ອໃນທີ່ໃຊ້ໃນການທົດລອງເທື່ອນີ້ ຜູ້ວິໄຈໄດ້ໃຊ້ເນື້ອໃນບົດຮຽນທີ່ໃກ້ຄຽງກັບຊີວິດປະຈຳວັນ ເຊິ່ງ ສອດຄ້ອງກັບຫຼັກສູດກົມສ້າງຄູປີ 2019 ໃນຫຼັກສູດຄູຄະນິດສາດ ໂດຍສຶກສາ ເນື້ອໃນການໃຊ້ຄຳ ການບອກທິດທາງ, ການໃຊ້ໂທລະສັບ ແລະ ການບອກອາການເຈັບປ່ວຍ ໃນການຈັດກິດຈະກຳການຮຽນ ແລະ ແບບທົດສອບວັດສາມາດໃນການເວົ້າພາສາອັງກິດ.

### 2.2.3 ຕົວປ່ຽນທີ່ໃຊ້ເຂົ້າໃນການຄົ້ນຄວ້າ

1) ຕົວປ່ຽນຕົ້ນ: ວິທີການຮຽນຮູ້ແບບຮ່ວມມືທີ່ເນັ້ນວິທີການສອນແບບ ທີມ ຄູ່ ດ່ຽວ

2) ຕົວປ່ຽນຕາມ ປະກອບດ້ວຍ

(1) ທັກສະການເວົ້າພາສາອັງກິດ

(2) ຄວາມເພິ່ງພໍໃຈຂອງນັກຮຽນຕໍ່ການພັດທະນາທັກສະການເວົ້າພາສາອັງກິດ

### 2.2.4 ແບບແຜນການທົດລອງ

ໃນການວິໄຈຄັ້ງນີ້ ຄະນະຜູ້ຄົ້ນຄວ້າໄດ້ນຳໃຊ້ ຮູບແບບການຄົ້ນຄວ້າແບບ The One-Group Pretest-Posttest Design ດັ່ງນີ້ (ລ້ອນ ສາຍຍົດ ແລະ ອັງຄະນາ ສາຍຍົດ, 2538:37)

| ສອບກ່ອນ | ທົດລອງ | ສອບຫຼັງ |
|---|---|---|
| $O_1$ | X | $O_2$ |

X ແທນ ການສອນແບບໃຊ້ບັນຫາເປັນຫຼັກ

$O_1$ ແທນການທົດສອບກ່ອນຮຽນ

$O_2$ ແທນການທົດສອບຫຼັງນຮຽນ

### 2.4.5 ການເກັບລວບລວມຂໍ້ມູນ

1) ກ່ອນສອນຜູ້ວິໄຈໄດ້ດຳເນີນການວັດທັກສະການເວົ້າພາສາອັງກິດໂດຍໃຊ້ແບບທົດສອບທັກສະການເວົ້າພາສາອັງກິດ (English Speaking Skills Test) ກ່ອນຮຽນ ແລ້ວນຳຂໍ້ມູນທີ່ໄດ້ມາວິເຄາະເປັນຄະແນນ ກ່ອນຮຽນ pret-test

2) ປະຕິບັດການຮຽນ-ການສອນຕາມແຜນການຈັດການຮຽນຮູ້ທີ່ສ້າງໄວ້ເຊິ່ງແຕ່ລະແຜນໃຊ້ເວລາ 5 ຊົ່ວໂມງ ຜູ້ວິໄຈໃຊ້ແຜນການຈັດການຮຽນຮູ້ໂດຍໃຊ້ວິທີການຮຽນຮູ້ແບບຮ່ວມມືທີ່ເນັ້ນວິທີການສອນແບບ ທີມ ຄູ່ ດ່ຽວ ໂດຍແບ່ງຂັ້ນການສອນອອກເປັນ 3 ຂັ້ນຕອນ: **ຂັ້ນທີ 1** ເປັນການເຂົ້າກຸ່ມໃຫຍ່ມີສະມາຊິກ 4-5 ຄົນໃຊ້ເວລາການສອນ 3 ຊົ່ວໂມງ ໂດຍນັກສຶກສາໄດ້ຮັບຫົວຂໍ້ວຽກມອບໝາຍໃບກິດຈະກຳ ແລະ ເນື້ອໃນບົດຮຽນຈາກຄູ ດຳເນີນກິດຈະກຳໂດຍຄູອະທິບາຍໃນໃບກິດຈະກຳ ເຊິ່ງຜູ້ຮຽນຈະໄດ້ແກ້ໄຂບັນຫາ ແລກປ່ຽນຮຽນຮູ້, ສະແດງຄວາມຄິດເຫັນ, ເຝິກຂຽນບົດສົນທະນາ, ເຝິກເວົ້າ ແລະ ເຝິກຊ້ອມການສະແດງຈະປະກອບດ້ວຍກິດຈະກຳລະຄອນສັ້ນ (Skits) ໂດຍມີຄູເປັນຜູ້ໃຫ້ຄຳແນະນຳ ແລະ ຊ່ວຍເຫຼືອ ຈາກນັ້ນອອກມາສະເໜີໜ້າກະດານ, **ຂັ້ນທີ 2** ເປັນຂັ້ນຈັບຄູ່ ມີ 2 ຄົນ ໃຊ້ເວລາ 1 ຊົ່ວໂມງ ເມື່ອຜູ້ຮຽນໄດ້ແກ້ບັນກາ ຫຼື ດຳເນີນກິດຈະກຳສຳເລັດໃນຂັ້ນ ທີມ ຢ່າງສົມບູນແລ້ວ ຜູ້ຮຽນກໍຈະຖືກແບ່ງອອກເປັນຄູ່ (Partners) ຜູ້ຮຽນຈະໄດ້ຮັບຫົວຂໍ້ວຽກມອບໝາຍ ທີ່ໃກ້ຄຽງກັບເນື້ອໃນທີ່ໃຊ້ໃນຊີວິດປະຈຳວັນຄືກັນກັບຂັ້ນ ທີມ ແລະ ຜູ້ຮຽນກໍ່ດຳເນີນການໃຫ້ບັນລຸເປົ້າໝາຍຮ່ວມກັນ ເຊັ່ນ: ການເຝິກເວົ້າ, ການເຝິກຂຽນບົດສົນທະນາສັ້ນໆ, ການເຝິກແຕ່ງປະໂຫຍກ ແລະ ເຝິກຊ້ອມກິດຈະກຳການສະແດງບົດບາດສົມມຸດ (Role Play) ກິດຈະກຳການລອກຮຽນແບບ(Simulation) ກິດຈະກຳການສ້າງບົດລະຄອນ (Scripted Play) ເປັນຕົ້ນ ໂດຍມີຄູເປັນຜູ້ໃຫ້ຄຳແນະນຳ ແລະ ຊ່ວຍເຫຼືອ ຈາກນັ້ນກໍ່ອອກມານຳສະເໜີໜ້າກະດານ ແລະ ຂັ້ນສຸດທ້າຍ ເປັນ **ຂັ້ນທີ 3** ດ່ຽວ ໃຊ້ເວລາ 1 ຊົ່ວໂມງ ເມື່ອຜູ້ຮຽນດຳເນີນກິດຈະກຳໃນ

ຂັ້ນ ຄູ່ ສຳເລັດແລ້ວ ຜູ້ຮຽນກໍ່ຈະຖືກແຍກອອກຈາກຄູ່ຂອງຕົນເອງ ໂດຍໃຫ້ດຳເນີນກິດຈະກຳເປັນລາຍບຸກຄົນ ເຊິ່ງຜູ້ຮຽນຈະຖືກທົດສອບຈາກ ຄູ ໃຫ້ປະຕິບັດກິດຈະກຳດ້ວຍຕົນເອງ ເຊັ່ນ: ການເວົ້າ, ການອ່ານ ແລະ ການສະແດງຢູ່ໜ້າກະດານ ເນື້ອໃນທີ່ໃຊ້ໃນການທົດສອບຜູ້ຮຽນກໍ່ຈະໃກ້ຄຽງກັນໃນຂັ້ນ ທີມ ແລະ ຄູ່ ເຊິ່ງປະກອບດ້ວຍກິດຈະກຳສະແດງທີ່ບໍ່ໄດ້ກຽມມາກ່ອນ (Improvisation) ແລະກິດຈະກຳການເວົ້າຕາມບົດລະຄອນທີ່ຄູສ້າງໄວ້ (Ex Scripted Play) ນັກຮຽນທັງໝົດມີເວລາໃນການຮຽນ-ການສອນ 20 ຊົ່ວໂມງ ທັງໝົດ 4 ບົດສອນ.

3) ຫຼັງຈາກສິ້ນສຸດການຈັດການຮຽນ-ການສອນທັງ 4 ແຜນ ນັກສຶກສາທັງ 19 ຄົນ ໃນກຸ່ມເປົ້າໝາຍຜູ້ວິໄຈໃຫ້ນັກສຶກສາເຮັດແບບທົດສອບທັກສະການເວົ້າພາສາອັງກິດຫຼັງຮຽນ (English Speak Test) ອີກເທື່ອ.

4) ຫຼັງຈາກຈັດການຮຽນ-ການສອນຄົບທັງ 4 ແຜນ ແລະ ທົດສອບຫຼັງຮຽນສຳເລັດແລ້ວ ຜູ້ວິໄຈໄດ້ຢາຍແບບສອບຖາມເຖິງຄວາມເພິ່ງພໍໃຈຕໍ່ການພັດທະນາທັກສະການເວົ້າພາສາອັງກິດໂດຍໃຊ້ວິທີການຮຽນຮູ້ແບບຮ່ວມມືທີ່ເນັ້ນວິທີການສອນແບບ ທີມ ຄູ່ ດ່ຽວ ໃຫ້ນັກສຶກສາໝາຍ.

5) ຮວບຮວມ ແລະ ວິເຄາະຂໍ້ມູນດ້ວຍວິທີການທາງສະຖິຕິ ເພື່ອທົດສອບສົມມຸດຖານ ແລະ ສະຫຼູບ ອະພິປາຍການທົດລອງ.

**2.2.6 ການວິເຄາະຂໍ້ມູນ**

1) ປຽບທຽບຄະແນນຈາກແບບທົດສອບທັກສະການເວົ້າພາສາອັງກິດ (English Speaking Skills Test) ໂດຍຊອກຫາຄ່າສະເລ່ຍ ຄ່າຜັນປ່ຽນມາດຖານ ແລະ ລະດັບຄຸນນະພາບຂອງຄະແນນ ໂດຍໃຊ້ຄ່າ t (Dependent Samples)

2) ວິເຄາະຄະແນນຈາກການປະເມີນທັກສະການເວົ້າພາສາອັງກິດຂອງນັກສຶກສາລະຫວ່າງຮຽນ ໃຊ້ວິທີການຮຽນຮູ້ແບບຮ່ວມມືທີ່ເນັ້ນວິທີການສອນແບບ ທີມ ຄູ່ ດ່ຽວ ມາທຽບເກນ ຢູ່ໃນເກນ ຈາກຄະແນນເຕັມ 20 ຄະແນນ ທັງ 4 ແຜນ ໂດຍຊອກຫາຄ່າສະເລ່ຍ, ເປີເຊັນ, ຄ່າຜັນປ່ຽນມາຖານ, ເກນການໃຫ້ຄະແນນ ແລະ ແປຄວາມໝາຍດັ່ງນີ້

ຄະແນນ 12 - 20 ໝາຍເຖິງ ດີ

ຄະແນນ 10 - 11.9 ໝາຍເຖິງ ພໍໃຊ້

ຄະແນນ 0 - 9.9 ໝາຍເຖິງ ປັບປຸງ

3) ປຽບທຽບຄະແນນຄວາມເພິ່ງພໍໃຈຂອງນັກສຶກສາຕໍ່ການພັດທະນາທັກສະການເວົ້າພາສາອັງ ໂດຍໃຊ້ວິທີການຮຽນຮູ້ແບບຮ່ວມມືທີ່ເນັ້ນວິທີການສອນແບບ ທີມ ຄູ່ ດ່ຽວ ຫຼັງຮຽນຈົບ ໂດຍຫາ ຄ່າສະເລ່ຍ, ຄ່າຜັນປ່ຽນມາດຖານ ແລະ ແປຄ່າສະເລ່ຍ ຕາມເກນດັ່ງນີ້ (ລ້ອນ ສາຍຍົດ ແລະ ອັງຄະນາ ສາຍຍົດ, 2539).

ຄ່າສະເລ່ຍ 4.50-5.00 ໝາຍເຖິງ ມີຄວາມເພິ່ງພໍໃຈຫຼາຍທີ່ສຸດ

ຄ່າສະເລ່ຍ 3.50-4.49 ໝາຍເຖິງ ມີຄວາມເພິ່ງພໍໃຈຫຼາຍ

ຄ່າສະເລ່ຍ 2.50-3.49 ໝາຍເຖິງ ມີຄວາມເພິ່ງພໍໃຈປານກາງ

ຄ່າສະເລ່ຍ 1.50-2.49 ໝາຍເຖິງ ມີຄວາມເພິ່ງພໍໃຈໜ້ອຍ

ຄ່າສະເລ່ຍ 1.00-1.49 ໝາຍເຖິງ ມີຄວາມເພິ່ງພໍໃຈໜ້ອຍທີ່ສຸດ

## 3. ຜົນໄດ້ຮັບ

1. ການປຽບທຽບຄ່າສະເລ່ຍຂອງຄະແນນຈາກການທົດສອບທັກສະການເວົ້າພາສາອັງກິດລະຫວ່າງກ່ອນ ແລະ ຫຼັງຮຽນ ໂດຍໃຊ້ວິທີການຮຽນຮູ້ແບບຮ່ວມມືທີ່ເນັ້ນວິທີການສອນແບບ ທີມ ຄູ່ ດຽວ ພົບວ່າ Sig(2-tailed) = 0.00 ເຫັນວ່າຄ່າ $^{*}p < 0.05$ ເຊິ່ງຍອມຮັບສົມມຸດຖານທີ່ໄດ້ຕັ້ງໄວ້ຄື: ຜົນການຮຽນຫຼັງຮຽນມີຄະແນນສະເລ່ຍສູງກວ່າກ່ອນຮຽນ ຢ່າງມີລະດັບຄວາມສຳຄັນທາງສະຖິຕິທີ່ລະດັບ 0.05 ໂດຍເຫັນໄດ້ຈາກຜົນການທົດສອບກ່ອນຮຽນນັກສຶກສາມີຄະແນນສະເລ່ຍເທົ່າ $\bar{X} = 14.58$ ແລະ ຄ່າ $SD = 2.610$ ແລະ ຫຼັງມີຄະແນນຫຼັງຮຽນນັກສຶກສາມີຄະແນນສະເລ່ຍເທົ່າ $\bar{X} = 31.00$ ແລະ ຄ່າ $SD = 3.756$

2. ຜົນການວິເຄາະຄະແນນການປະເມີນທັກສະການເວົ້າພາສາອັງກິດຂອງນັກສຶກສາທີ່ເປັນກຸ່ມເປົ້າໝາຍໃນລະຫວ່າງຮຽນໂດຍໃຊ້ວິທີການຮຽນຮູ້ແບບຮ່ວມມືທີ່ເນັ້ນວິທີການສອນແບບ ທີມ ຄູ່ ດ່ຽວ ທັງໝົດ 4 ບົດສອນ ພົບ

ວ່າ: ນັກສຶກສາມີຄະແນນທັກສະການເວົ້າພາສາອັງກິດໂດຍພາບລວມ ຢູ່ໃນລະດັບດີ ເຊິ່ງມີຄ່າສະເລ່ຍລວມແຕ່ລະບົດສອນ $\bar{X}=17.12$ ແລະ ຄ່າ $SD=0.144$ ດັ່ງນັ້ນ; ສະແດງວ່າການຈັດການຮຽນຮູ້ໂດຍໃຊ້ວິທີການຮຽນຮູ້ແບບຮ່ວມມືທີ່ເນັ້ນວິທີການສອນແບບ ທີມ ຄູ່ ດ່ຽວ ສົ່ງເສີມໃຫ້ນັກຮຽນມີການພັດທະນາທັກສະການເວົ້າພາສາອັງກິດສູງຂຶ້ນ

3. ຜົນການປະເມີນຄວາມເພິ່ງພໍໃຈຕໍ່ການພັດທະນາທັກສະການເວົ້າພາສາອັງກິດຂອງນັກສຶກສາ ກຸ່ມເປົ້າໝາຍ ຕົວຢ່າງ ໂດຍໃຊ້ວິທີການຮຽນຮູ້ແບບຮ່ວມມືທີ່ເນັ້ນວິທີການສອນແບບ ທີມ ຄູ່ ດ່ຽວ ພົບວ່າ: ນັກສຶກສາມີຄວາມເພິ່ງພໍໃຈຫຼັງຈາກການໃຊ້ວິທີການຮຽນຮູ້ແບບຮ່ວມມື ທີ່ເນັ້ນວິທີການສອນແບບ ທີມ ຄູ່ ດ່ຽວ ເພື່ອເວົ້າພາສາອັງກິດມີຄວາມເພິ່ງພໍໃຈໂດຍລວມຢູ່ໃນລະດັບຫຼາຍ ໂດຍມີຄ່າສະເລ່ຍເທົ່າກັບ $\bar{X}=4.40$ ແລະ ຄ່າ $SD=0.62$

## 4. ວິພາກຜົນ

ຈາກການວິໄຈ ວິທີການຮຽນຮູ້ແບບຮ່ວມມືທີ່ເນັ້ນວິທີການສອນແບບ ທີມ ຄູ່ ດ່ຽວ ທີ່ຜູ້ວິໄຈໄດ້ນຳໃຊ້ໃນການຈັດການຮຽນ-ການສອນເພື່ອພັດທະນາທັກສະການເວົ້າພາສາອັງກິດເປັນວິທີການສອນທີ່ມີປະສິດທິພາບໂດຍເນັ້ນການເຮັດວຽກຊ່ວຍເຫຼືອເຊິ່ງກັນ ແລະ ກັນ, ສ້າງແຮງຈູງໃຈໃນການແກ້ໄຂບັນຫາເພື່ອໃຫ້ບັນລຸຕາມຈຸດປະສົງ ແລະ ສາມາດພັດທະນາທັກສະການເວົ້າພາສາອັງກິດໃຫ້ກັບນັກສຶກສາສູງຂຶ້ນ; ເນື່ອງຈາກ ນັກສຶກສາໄດ້ແລກປ່ຽນຮຽນຮູ້ ໄດ້ຊ່ວຍເຫຼືອ ແລະ ແກ້ບັນຫາໄປນຳກັນ ໂດຍຜ່ານຂະບວນການເຮັດວຽກກຸ່ມ ການເຮັດວຽກເປັນຄູ່ ແລະ ການເຮັດວຽກເປັນລາຍບຸກຄົນ ໂດຍມີກິດຈະກຳທີ່ຫຼາກຫຼາຍເພື່ອສົ່ງເສີມການພັດທະນາທັກສະການເວົ້າພາສາອັງກິດ ເຊັ່ນ: ກິດຈະກຳລະຄອນສັ້ນ (Skits), ກິດຈະກຳບົດບາດສົມມຸດ (Role plays) ແລະ ກິດຈະກຳທ່ອງບົດຮຽນ ເວົ້າຕາມບົດລະຄອນເປັນຕົ້ນ ສອດຄ່ອງກັບງານວິໄຈຂອງ ເຢນີ ຊູລາສະຕິ (Yeni, 2009) ໄດ້ສຶກສາການເສີມສ້າງຜູ້ຮຽນໃນການເວົ້າອະພິປາຍໂດຍໃຊ້ສອນແບບ ທີມ ຄູ່ ດ່ຽວ ໃນໂຮງຮຽນມັດຍົມສຶກສາໂອເລ ພົບວ່າ: ຜູ້ຮຽນມີການພັດທະນາຄວາມສາມາດໃນການເວົ້າ ໂດຍໃຫ້ຜູ້ຮຽນສະແດງຄວາມຄິດເຫັນ ທັດສະນະຄະຕິ ແລະ ຄວາມຮູ້ສຶກຕ່າງໆໄດ້ຢ່າງຄ່ອງແຄ້ວ ຄູຄວນສ້າງໃຫ້ຜູ້ຮຽນ ມີຄວາມໝັ້ນໃຈ ແລະ ກະຕືລືລົ້ນໃນການຮຽນຮູ້ ແລະ ມີຄວາມສຸກໃນການເຮັດກິດຈະກຳ ແລະ ຍັງສອດຄ່ອງກັບ (Harmer, 2001). ໄດ້ເວົ້າວ່າ ການພັດທະນາ ການເວົ້າຜ່ານວິທີການຮຽນຮູ້ແບບຮ່ວມມື ທີ່ເນັ້ນການສອນແບບ ທີມ ຄູ່ ດ່ຽວ ຈະເຮັດໃຫ້ຜູ້ຮຽນມີຄວາມໝັ້ນໃຈໃນການເວົ້າພາສາອັງກິດ ແລະ ມີໂອກາດໃນການໃຊ້ພາສາໃນຫຼາກຫຼາຍສະຖານະການ ເຊິ່ງນັກຮຽນໄດ້ເຝິກອ່ານ, ເຝິກອອກສຽງ, ເຝິກຂຽນບົດສົນທະນາ, ເຝິກຊ້ອມການເວົ້າ ແລະ ອອກມາເວົ້ານຳສະເໜີຜົນງານໜ້າກະດານໂດຍການສະແດງລະຄອນສັ້ນ.

ຜົນການປະເມີນຄວາມເພິ່ງພໍໃຈຫຼັງການໃຊ້ວິທີການຮຽນຮູ້ແບບຮ່ວມມືທີ່ເນັ້ນວິທີການສອນແບບທີມ ຄູ່ ດ່ຽວ ນັກສຶກສາມີຄວາມເພິ່ງພໍໃຈຕໍ່ການເວົ້າພາສາອັງກິດໃນລະດັບຫຼາຍ ເຊິ່ງການສອນນີ້ ເປັນວິທີການທີ່ມີປະໂຫຍດຫຼາຍຊ່ວຍໃຫ້ຜູ້ຮຽນໄດ້ປະສົບການ ຮຽນຮູ້ພາສາອັງກິດຜ່ານຂະບວນການເຮັດວຽກຮ່ວມມືເປັນທີມ: ການມີມະນຸດສຳພັນ, ການປະຕິສຳພັນ ແກ້ໄຂບັນຫາຢ່າງມີຂັ້ນຕອນໂດຍຜ່ານຂະບວນການເຮັດວຽກທີມຢ່າງສ້າງສັນ ເມື່ອນັກຮຽນມີຄວາມໝັ້ນໃຈຍິ່ງຂຶ້ນກໍ່ສາມາດເຮັດວຽກດ້ວຍຕົນເອງ ຫຼື ເຮັດວຽກເປັນລາຍບຸກຄົນ ໃນການເສີມສ້າງການພັດທະນາທັກສະການເວົ້າພາສາອັງກິດຂອງນັກສຶກສາ ສ້າງຄວາມໝັ້ນໃຈ ແລະ ຄວາມເພິ່ງພໍໃຈໃນການຮຽນພາສາອັງກິດຫຼາຍຂຶ້ນ ເຊິ່ງສອດຄ່ອງກັບງານວິໄຈຂອງ (Yeni, 2009) ໄດ້ສຶກສາການເສີມສ້າງຜູ້ຮຽນໃນການເວົ້າອະພິປາຍໂດຍໃຊ້ ສອນແບບ ທີມ ຄູ່ ດ່ຽວ ໃນໂຮງຮຽນມັດຍົມສຶກສາໂອເລ ພົບວ່າ ພາຍຫຼັງໄດ້ຮັບການຈັດກິດຈະກຳການຮຽນ-ການສອນ ນັກຮຽນມີຄວາມເພິ່ງພໍໃຈຢູ່ໃນລະດັບຫຼາຍ

## 5. ສະຫຼຸບ

ຜົນຂອງການສຶກສາຄົ້ນຄວ້າພົບວ່າ ນັກສຶກສາມີຜົນການຮຽນວິຊາພາສາອັງກິດທີ່ໄດ້ຮັບການສອນແບບທີມ ຄູ່

ດ່ຽວ ສະເລ່ຍລວມຫຼັງຮຽນ ສູງກວ່າ ກ່ອນຮຽນ ຢ່າງມີລະດັບຄວາມສຳຄັນທາງສະຖິຕິທີ່ລະດັບ 0.05 ແລະ ນັກສຶກສາ ມີຄວາມເພິ່ງພໍໃຈຕໍ່ການພັດທະນາທັກສະການເວົ້າພາສາອັງກິດໂດຍໃຊ້ວິທີການຮຽນຮູ້ ແບບເນັ້ນວິທີການສອນແບບ ທີມ ຄູ່ ດ່ຽວ ໂດຍລວມນັກສຶກສາມີຄວາມເພິ່ງພໍໃຈຢູ່ໃນລະດັບຫຼາຍເມື່ອພິຈາລະນາເປັນດ້ານພົບວ່າ: ນັກສຶກສາມີຄວາມເພິ່ງພໍໃຈໃນລະດັບຫຼາຍໃນດ້ານປະໂຫຍດທີ່ໄດ້ຮັບຈາກການຈັດການຮຽນ-ການສອນ, ດ້ານສື່ການຮຽນ-ການສອນ, ດ້ານການຈັດການຮຽນ-ການສອນ ແລະ ດ້ານເນື້ອໃນທີ່ໃຊ້ ຕາມລຳດັບ

## 6. ຂໍ້ຂັດແຍ່ງ

ຂ້າພະເຈົ້າໃນນາມຜູ້ຄົ້ນຄວ້າຂໍປະຕິຍານຕົນວ່າ: ຂໍ້ມູນທັງໝົດໃນບົດຄວາມວິຊາການດັ່ງກ່າວນີ້ ແມ່ນບໍ່ມີຜົນປະໂຫຍດແອບແຝງໃດໆກັບອົງກອນທີ່ກ່ຽວຂ້ອງ

## 7. ເອກະສານອ້າງອີງ


ສູນພັດທະນາການຄູ ແລະກະຊວງສຶກສາ. (2019). ຫຼັກສູດສ້າງຄູມັດທະຍົມລະດັບປະລິນຍາຕີສາຂາວິຊາຄູຄະນິດສາດ. ນະຄອນຫຼວງວຽງຈັນ: ໂຮງພິມກະຊວງສຶກສາທິການ ແລະ ກິລາ.

ສຸມິດຣາ ອັງວັດນກຸນ. (2535). ວິທີສອນພາສາອັງກິດເປັນພາສາຕ່າງປະເທດ. ກຣຸງເທບຯ: ສຳນັກພິມຈຸນລາລົງກອນມະຫາວິທະຍາໄລ.

ທິດສະນາ ແຂມມະນີ. (2556). ສາດການສອນ: ອົງຄວາມຮູ້ເພື່ອການຈັດການຂະບວນການຮຽນຮູ້ທີ່ມີປະສິດທິພາບ. (ພິມຄັ້ງທີ 17). ກຸງເທບມະຫານະຄອນ: ຈຸນລາລົງກອນມະຫາວິທະຍາໄລ.

ປະເທືອງ ໃຈຫານ. (2546). ການປຽບທຽບຄວາມສາມາດດ້ານທັກສະການເວົ້າພາສາອັງກິດ ເພື່ອການສື່ສານ ແລະແຮງຈູງໃຈໃນການຮຽນວິຊາພາສາອັງກິດ ສຳລັບ ນັກຮຽນຊັ້ນມັດຍົມ ທີ່ຮຽນໂດຍໃຊ້ ແລະ ບໍ່ໃຊ້ກິດຈະກຳການສະແດງລະຄອນ. ວິທະຍານິພົນ. ສາຂາການສອນພາສາອັງກິດ ໃນຖານະພາສາຕ່າງປະເທດ. ມະຫາວິທະຍາໄລສີລະປາກອນ.

ລ້ອນ ສາຍຍົດ ແລະ ອັງຄະນາ ສາຍຍົດ. (2539). ເທັກນິກການວັດຜົນການຮຽນຮູ້. ກຸງເທບ-ມະຫານະຄອນ: ຊົມລົມເດັກ.

Harmer, J. (2001). The Practice of English Language Teaching.

Hidayanti. (2011). The Use of Team Pair Solo in Improving Students'Reading Comprehension. Thesis. English department, faculty of Languages and Arts, Semarang State University.

Ika K. (2012).The Use of Picture-Guessing Games In Implementing Team-Pair-Solo Technique to Improve the Students' Ability to write Descriptive Text. Thesis online. Faculty of Languages and Arts of Semarang State University. <from www.eric.ed.gov/PDFS/ED382035.pd>, Retrieved August 2, 2020.

Kagan, K., Kagan, M., & Kagan, S. (2000). Cooperative learning structures for teambuilding. Kagan Cooperative Learning.1160 Calle Cordillera, San Clemente, CA 92673.

Yeni S. (2009). Encouraging Students' Speaking Mastery of Discussion Text by Using Team Pair Solo Strategy at Senior High School Oleh. Thesis. English Department College of Teacher Training and Education. Indonesia.


ຕາຕະລາງ 1: ປຽບທຽບຄະແນນຜົນການຮຽນລະຫວ່າງກ່ອນ ແລະຫຼັງຮຽນໂດຍໃຊ້ ແບບທີມ ຄູ່ ດ່ຽວ

**Paired Samples Statistics**

| | | Mean | N | Std. Deviation | Std. Error Mean |
|---|---|---|---|---|---|
| Pair 1 | after | 31.00 | 19 | 3.756 | 0.862 |
| | before | 14.58 | 19 | 2.610 | 0.599 |

**Paired Samples Correlations**

| | N | Correlation | Sig. |
|---|---|---|---|
| Pair 1 after & before | 19 | 0.941 | 0.000 |

**Paired Samples Statistics**

| | Paired Differences | | | | | T | df | Sig. (2-tailled) |
|---|---|---|---|---|---|---|---|---|
| | Mean | Std. Deviation | Std. Error Mean | 95% Confidence interval of the Difference | | | | |
| | | | | Lower | Upper | | | |
| Pair 1 after-before | 16.421 | 1.575 | 0.361 | 15.662 | 17.180 | 45.456 | 18 | 0.000 |

ຕາຕະລາງ 2: ຜົນການວິເຄາະຄະແນນການປະເມີນທັກສະການເວົ້າພາສາອັງກິດຂອງນັກຮຽນກຸ່ມຕົວຢ່າງ ຮຽນໃນແຕ່ລະແຜນການຈັດການຮຽນຮູ້ ໂດຍໃຊ້ວິທີການຮຽນຮູ້ແບບຮ່ວມມືທີ່ເນັ້ນວິທີການແບບທີມ ຄູ່ ດ່ຽວ

**Descriptive**

| | N | Sum | Mean | Std. Deviation |
|---|---|---|---|---|
| Plan 1 A | 19 | 310 | 16.32 | 1.057 |
| Plan 1 B | 19 | 114 | 6.00 | 1.054 |
| Plan 2 A | 19 | 324 | 17.05 | 0.780 |
| Plan 2 B | 19 | 136 | 7.16 | 1.425 |
| Plan 3 A | 19 | 333 | 17.53 | 1.073 |
| Plan 3 B | 19 | 148 | 7.79 | 1.182 |
| Plan 4 A | 19 | 334 | 17.58 | 1.071 |
| Plan 4 B | 19 | 161 | 8.47 | 1.611 |

ຕາຕະລາງ 3: ສະແດງເຖິງຄ່າສະເລ່ຍ ($\bar{X}$) ແລະ ຄ່າຜັນປ່ຽນມາດຖານ (S.D.) ຂອງຄວາມເພິ່ງພໍໃຈຂອງນັກສຶກສາຕໍ່ການສອນທີ່ໃຊ້ວິທີສອນແບບ ທີມ ຄູ່ ດ່ຽວ ລວມທັງ 5 ດ້ານ

| ລຳດັບ | ດ້ານທີ່ປະເມີນ | $\bar{X}$ | S.D | ລະດັບຄວາມເພິ່ງພໍໃຈ |
|---|---|---|---|---|
| 1 | ເນື້ອໃນ | 4.31 | 1.02 | ຫຼາຍ |
| 2 | ການຈັດກິດຈະກຳການຮຽນ-ການອນ | 4.38 | 0.34 | ຫຼາຍ |
| 3 | ສື່ການຮຽນ-ການສອນ | 4.48 | 0.36 | ຫຼາຍ |
| 4 | ການວັດ ແລະ ປະເມີນ | 4.38 | 1.08 | ຫຼາຍ |
| 5 | ປະໂຫຍທີ່ໄດ້ຮັບຈາກການຮຽນ-ການສອນ | 4.48 | 0.31 | ຫຼາຍ |
| ລວມ | | 4.40 | 0.62 | ຫຼາຍ |